*The Promotion of Family Health Association of Lao PDR*
*House No. 449 Unit 36, Phonkheng Village,*
*Saysettha District, Vientiane Capital, LAO PDR*
*Tel: 856 21 413261*
*Email: pfha@outlook.com/ Website: www.pfhalaos.org*

# ປະກາດຮັບພະນັກງານ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ) ເປັນອົງການຈັດຕັ້ງທາງສັງຄົມທີ່ບໍ່ຫວັງຜົນກຳໄລ (NPA). ເພື່ອຊ່ວຍເຫຼືອປະຊາຊົນທີ່ເປັນກຸ່ມສ່ຽງ ແລະ ກຸ່ມດ້ອຍໂອກາດໃຫ້ເຂົ້າເຖິງຂໍ້ມູນຂ່າວສານທາງດ້ານສຸຂະພາບທີ່ຖືກຕ້ອງແລະໄດ້ເຂົ້າຮັບການບໍລິການດ້ານສຸຂະພາບຢ່າງເທົ່າທຽມແລະຮອບດ້ານ. ສສສຄໄດ້ຮັບການສະໜັບສະໜູນເປັນຫລັກດ້ານວິຊາການ ແລະ ທຶນຮອນແມ່ນມາຈາກ ສະຫະພັນວາງແຜນຄອບຄົວສາກົນ (International Planned Parenthood Federation ຫຼື IPPF) ທີມີຫ້ອງການພາກພື້ນຢູ່ປະ ເທດມາເລເຊຍ ນັບຕັ້ງແຕ່ປີ 2004 ເປັນຕົ້ນມາ. ປະຈຸບັນ ສສສຄ ມີສະມາຊິກຫຼາຍກວ່າ 50ທ່ານທີ່ມີປະສົບການ, ຄວາມຊ່ຽວຊານແລະປະຫວັດການເຮັດວຽກຫຼາກຫຼາຍທີ່ແຕກຕ່າງກັນ. ຜົນໄດ້ຮັບ/ຜົນສຳ ເລັດທີ່ສຳຄັນທີ່ສຸດຂອງ ສສສຄ ແມ່ນການປະກອບ ສ່ວນສ້າງຂີດຄວາມສາມາດຂອງພະນັກງານສາທາລະນະສຸກ, ຍົກສູງຄຸນນະພາບການເບິ່ງແຍງ, ເຮັດໃຫ້ກຸ່ມເປົ້າໝາຍ ຢູ່ເຂດຫ່າງໄກສອກຫຼີກເຂົ້າເຖິງການບໍລິການທາງດ້ານສຸຂະພາບຈະເລີນພັນ, ການວາງແຜນຄອບຄົວແລະຂໍ້ມູນຂ່າວ ສານກ່ຽວກັບສຸຂະພາບຈະເລີນພັນ.

ສສສຄ, ມີຂົງເຂດ ໃນການເຮັດວຽກ ໃນທົ່ວປະເທດ ແລະ ທຸກລະດັບ, ໂດຍສະເພາະໃນລະດັບທ້ອງຖິ່ນ. ປະຈຸບັນນີ້ ສສສຄ ມີໂຄງການຢູ່ບາງແຂວງ ແລະ ບາງເມືອງ ເຊັ່ນ: ໂຄງການແມ່ປອດໄພ, ໂຄງການ ຮ່າງກາຍຂອງຂ້ອຍອະນາຄົດຂອງຂ້ອຍ, ໂຄງການ" ປັບປຸງການເຂົ້າເຖິງການບໍລິການດ້ານສາທາລະນະສຸກຂອງແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ, ໂຄງການເຊື່ອມສານແມ່ປອດໄພ ແລະ ຕອບສະໜອງ.

ດັ່ງນັ້ນ, ໂຄງການ" **,ໂຄງການເຊື່ອມສານແມ່ປອດໄພ ແລະ ຕອບສະໜອງ**, ໂຄງການດັ່ງກ່າວນີ້ເລີ່ມຈັດຕັ້ງແຕ່ ປີ ***2024-2028*** .

ດັ່ງນັ້ນສະມະຄົມສົ່ງເສີມສຸຂະພາບຄອບຄົວ(ສສສຄ) ຕ້ອງການເພືອນຮ່ວມງານໃນຕຳແຫນ່ງ:

- **ຕິດຕາມແລະປະເມີນຜົນໂຄງການ ( Project M&E) "Respond"(1 ຕຳແໜ່ງ )**
  **(ປະຈຳຢູ່ ຫ້ອງການສສສຄ ນະຄອນຫຼວງວຽງຈັນ)**

## ພາລະບົດບາດແລະຄວາມຮັບຜິດຊອບ

ຕຳແໜ່ງງານນີ້ ມີພາລະບົດບາດ ແລະ ຄວາມຮັບຜິດຊອບ ກຳນົດຜົນສຳເລັດທີ່ມາຈາກໂຄງການປຽບທຽບປະສິດທິພາບຕໍ່ງົບປະມານທີ່ລົງທຶນແຕ່ລະໂຄງການ, ຊ່ວຍອອກແບບໂຄງການແລະກິດໃຫມ່ ຕອບສະໜອງຄວາມຕ້ອງການຂອງຜູ້ໃຫ້ທຶນ ແລະຜູ້ສະໜັບສະໜູນ ຕິດຕາມປະເມີນຜົນຕົວຊີ້ວັດຂອງ ສສສຄ, ຕົວຊີ້ວັດຂອງແຕ່ລະໂຄງການ ໃຫ້ສາມາດວັດແທກໄດ້ເຖິງການປ່ຽນແປງທີ່ເກີດຂຶ້ນຍ້ອນການຈັດຕັ້ງປະຕິບັດໂຄງການຂອງ ສສສຄ, ມີຄວາມແນ່ນອນ ຖືກຕ້ອງ ມີຫລັກຖານອ້າງອີງແລະ ແທດເໝາະກັບສະພາບຄວາມເປັນຈິງ ເພື່ອໃຫ້ຮັບປະກັນຜົນສຳເລັດຂອງ ສສສຄ ແລະ ຜົນສຳເລັດຂອງໂຄງການແມ່ນເປັນໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດ.

*The Promotion of Family Health Association of Lao PDR*
*House No. 449 Unit 36, Phonkheng Village,*
*Saysettha District, Vientiane Capital, LAO PDR*
*Tel: 856 21 413261*
*Email: pfha@outlook.com/ Website: www.pfhalaos.org*

1. **ການກຽມຕົນເອງ**

- ຮູ້ຈັກ ແລະ ເຂົ້າໃຈດີຕໍ່ແຜນຍຸດທະສາດ, ພາລະບົດບາດ ແລະ ນະໂຍບາຍຂອງສະມາຄົມ.
- ເຂົ້າໃຈດີຕໍ່ກອບແຜນງານ, ຕົວຊີ້ວັດ ຂອງສສສຄ ແລະ ໂຄງການພ້ອມແນວທາງການຈັດຕັ້ງປະຕິບັດຂອງໂຄງການ.
- ຈຳແນກໃຫ້ໄດ້ກ່ຽວກັບກຸ່ມເປົ້າໝາຍທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ.
- ສຶກສາຮຽນຮູ້ໃຫ້ເຂົ້າໃຈດີກ່ຽວກັບ DHI2S
- ມີຄວາມຮູ້ຄວາມສາມາດທາງດ້ານວິຊາການທາງດ້ານ M&E ແລະ ການເງິນ.
- ມີທັກສະການສື່ສານທີ່ດີ ແລະ ມີຄວາມຮູ້ດ້ານຄອມພິວເຕີ ເປັນຕົ້ນ DATA Analyze, MS Word, MS Excel, MS Power BI, AI ໃນລະດັບກາງ-ດັບດີ.

2. **ໜ້າວຽກທີ່ຈະໄດ້ຈັດຕັ້ງປະຕິບັດ**

- ເກັບກຳ ແລະ ທົບທວນຂໍ້ມູນຢ່າງເປັນປົກກະຕິກ່ຽວກັບຕົວຊີ້ວັດຂອງ ສສສຄ, ຕົວຊີ້ວັດຂອງໂຄງການ ລວມທັງ ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ແລະ ການນຳໃຊ້ປັດໃຈນຳເຂົ້າໂຄງການ.
- ຄືຖານຂໍ້ມູນແຜນງານຂອງແຕ່ລະໂຄງການລົງໃນລະບົບ Dashboard ທຸກຄັ້ງທີ່ໄດ້ຮັບທຶນ ໂດຍຜ່ານ App ໃນ Google sheet ຫລື App ໃນ KOBO
- ພົວພັນປະສານງານກັບຫົວໜ້າແຜນງານ ແລະ ຜູ້ປະສານງານໂຄງການໃຫ້ຕໍ່ເນື່ອງ ເພື່ອຕິດຕາມຂໍ້ມູນໃນລະບົບ Dashboard.
- ວາງແຜນ ການຕິດຕາມແລະປະເມີນຜົນແຕ່ລະໂຄງການເປັນ ໄຕມາດ, ປີ ແລະ ລາຍກິດຈະກຳ
- ປະສານສົມທົບກັບຫົວໜ້າແຜນງານໃນການພັດທະນາເຄື່ອງມືການຕິດຕາມແລະປະເມີນຄຸນນະພາບຂອງໂຄງການແລະຕົວຊີ້ວັດຂອງໂຄງການ.
- ລົງຕິດຕາມຄວາມຄືບໜ້າກ່ຽວກັບຜົນການຈັດຕັ້ງປະຕິບັດໂຄງການ ແລະ ຄວາມຄືບໜ້າຕົວຊີວັດຂອງໂຄງການ ພ້ອມກວດເຊັກເອກະສານ ແຜນຂອງໂຄງການ, ການນັບໃຊ້ແບບຟອມ, ກວດນັບຈຳນວນຕົວຊີ້ວັດ, ຈຳນວນຜູ້ໄດ້ຮັບຜົນປະໂຫຍດ ບົດລາຍງານ ທຸກໆເດືອນ, ຫລື ໄຕມາດພ້ອມກັບບັນທຶກ ແລະ ຖ່າຍຮູບຢັ້ງຢືນ (ສຳລັບເອກະສານທີ່ບໍ່ຖືກຕ້ອງ ເພື່ອເປັນຫຼັກຖານ).
- ຊຸມກວດເຊັກກຸ່ມເປົ້າໝາຍກ່ຽວກັບຜົນປະໂຫຍດທີ່ເຂົາເຈົ້າໄດ້ຮັບໂດຍອີງຕາມຂໍ້ມູນລາຍງານ.
- ຕິດຕາມກວດຂໍ້ມູນໃນລະບົບ Dashboard, KOBO ແລະ ອັບເດດທຸກມື້ ຫລື ອາທິດ ເພື່ອເບິ່ງຄວາມຄືບໜ້າຂອງໂຄງການ ແລະ ຕົວຊີ້ວັດ
- ຈັດຂໍ້ມູນໃຫ້ເປັນລະບົບໃນຄອມພິວເຕີ ແລະ ຟາຍເອກະສານ ພ້ອມຮັກສາຂໍ້ມູນໃນຄອມພິວເຕີ ແລະ ຟາຍໃຫ້ມີຄວາມປອດໄພໃນລະບົບ ຊອບແວ ແລະ ຮາດແວ.
- ລາຍງານຄວາມຄືບໜ້າ ແລະ ສະຫລຸບລາຍງານໂດຍສັງລວມໃຫ້ກັບຜູ້ໃຫ້ທຶນ, ປະທານສະມາຄົມ ແລະ ຜູ້ປະສານງານໂຄງການຢ່າງຕໍ່ເນື່ອງ.
- ຕິດຕາມຄຸນນະພາບຂອງຂອບເວລາການສົ່ງລາຍງານຂອງແຕ່ລະໂຄງການ ແລະ ຄູ່ຮ່ວມງານ, ເພື່ອຮ່ວມງານ

*The Promotion of Family Health Association of Lao PDR*
*House No. 449 Unit 36, Phonkheng Village,*
*Saysettha District, Vientiane Capital, LAO PDR*
*Tel: 856 21 413261*
*Email: pfha@outlook.com/ Website: www.pfhalaos.org*

- ຮ່ວມກັບຫົວໜ້າແຜນງານ, ຄະນະອຳນວຍການ, ຜູ້ໃຫ້ທຶນ ລົງຕິດຕາມຊຸກຍູ້ ພະນັກງານຂັ້ນແຂວງ, ຂັ້ນເມືອງ ໃນການລົງຂໍ້ມູນ ແລະ ການເຮັດລາຍງານຄຸນນະພາບ
- ຮັບປະກັນຄຸນນະພາບການຈັດຕັ້ງກິດຈະກຳໂຄສະນາໃນຊຸມຊົນປະຈຳໄຕມາດ (community event) ໃຫ້ກຸ່ມເປົ້າໝາຍໃໝ່ໆທີ່ເປັນໄວໜຸ່ມໄດ້ເຂົ້າຮ່ວມໃຫ້ຫຼາຍທີ່ສຸດ ເພື່ອຊ່ວຍເຜີຍແຜ່ຂ່າວສານໄປຫາກຸ່ມໃໝ່ໆຢ່າງກວ້າງຂວາງ.

3. **ການປະສານງານໂຄງການ**

- ປະສານງານຫລັກກັບຫົວໜ້າສາຍງານຂອງຕົນ, ໜ່ວຍງານຕິດຕາມປະເມີນໂຄງການ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງທັງພາຍໃນແລະນອກ
- ເປັນຕົວແທນຂອງ PFHA ເຂົ້າຮ່ວມກອງປະຊຸມພາຍໃນແລະພາຍໃນຕາມຄຳແນະນຳຂອງຫົວໜ້າວາຍງານແລະຂອງອົງກອນ ສສສຄ.
- ປະສານງານກັບພະນັກງານ PFHA ທີ່ກ່ຽວຂ້ອງທັງໝົດເພື່ອສະໜັບສະໜູນ ແລະ ຊ່ວຍເຫຼືອໂຄງການພາຍໃນ ອື່ນໆ.

4. **ການສ້າງຄວາມອາດສາມາດ**

- ພັດທະນາຄວາມອາດສາມາດຂອງຕົນຢ່າງຕໍ່ເນື່ອງເຊັ່ນ: ການເປັນຜູ້ນຳໃນວຽກງານຕິດຕາມປະເມີນຜົນໂຄງການ, ການປະສານງານ, ທັກສະການສື່ສານ, ວິຊາການ, ດ້ານການເປັນຄູຝຶກວຽກງານ M&E,
- ເຂົ້າຮ່ວມຝຶກອົບຮົມເພື່ອພັດທະນາຄວາມສາມາດຂອງຕົນຕາມການມອບໝາຍຂອງຫົວໜ້າສາຍງານ ແລະ ຂອງອົງກອນ ສສສຄ.
- ພັດທະນາຄວາມອາດສາມາດຂອງຕົນໃນການນຳໃຊ້ ເທັກໂນໂລຊີເຊັ່ນ: AI, KOBO, Google sheet, Google form, DATA Analyze.

5. **ເງື່ອນໄຂ**

- ເປັນພົນລະເມືອງລາວ
- ດ້ານການສຶກສາ ຈົບຊັ້ນສູງຂຶ້ນໄປ ສາຂາໃດກໍ່ໄດ້
- ດ້ານພາສາສາມາດສື່ສານພາສາອັງກິດລະດັບພື້ນຖານ, ຖ້າສື່ສານພາສາຊົນເຜົ່າໄດ້ຈະເປັນການດີ
- ດ້ານຄອມພິວເຕີສາມາດນຳໃຊ້ Word, Excel ແລະ Power Point, AI, KOBO, Google sheet, Google form, DATA Analyze.
- ມີປະສົບການໃນການຕິດຕາມປະເມີນຜົນໂຄງການຢ່າງນ້ອຍ 2ປີຂຶ້ນໄປ
- ມີປະສົບການແລະຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນແລະການວາງແຜນຄອບຄົວ
- ມີປະສົບການແລະຄວາມຮູ້ກ່ຽວກັບຄວາມສະເໝີພາບຍິງຊາຍແລະການຕ້ານການໃຊ້ຄວາມຸນແຮງ
- ມີມະນຸດສຳພັນດີ, ມັກຮັກໃນວຽກງານພັດທະນາຊົນນະບົດເຂດຫ່າວໄກຊອກຫລີກ ສາມາດເດີນທາງໄປເຂດພື້ນທີ່ຫ່າງໄກສອກຫລີກໄດ້

**ເງິນເດືອນ:** ສາມາດຕໍ່ລອງໄດ້ ອີງຕາມຄຸນສົມບັດ ແລະ ປະສົບການ

**ໃບສະໝັກ:** ສະມະຄົມສົ່ງເສີມສຸຂະພາບຄອບຄົວ ມຸ່ງຫມັ້ນທີ່ຈະໃຫ້ໂອກາດ ຢ່າງສະເຫມີພາບ, ເທົ່າທຽມ ແລະ ມີຄວາມຫຼາກຫຼາຍທາງດ້ານວັດທະນະທຳ. ຍິນດີຕ້ອນຮັບຜູ້ສະຫມັກ ຈາກທຸກພາກສ່ວນ. ພວກເຮົາເຂັ້ງຂັດ ໃນນະໂຍບາຍການປົກປ້ອງສິດທິດເດັກ, ໄວໜຸ່ມ ແລະ ຜູ້ທີ່ມີຄວາມສ່ຽງ ຖ້າທ່ານຖືກຄັດເລືອກ. ທ່ານຈະຕ້ອງປະຕິບັດຕາມນະໂຍບາຍນີ້. ຜູ້ສະໝັກສາມາດຍື່ນຊີວະປະຫວັດ, ພ້ອມໃສ່ຊື່ຜູ້ຢັ້ງຢືນ 3 ທ່ານໃນໃບຊີວະປະຫວັດ, ແລະ ໃບສະໝັກວຽກ (ສຳລັບເອກະສານປະກອບອື່ນໆ ເຊັ່ນ: ໃບແຈ້ງໂທດ, ໃບກວດສຸຂະພາບ, ....ແມ່ນສາມາດຍື່ນເພີ່ມເຕີມຫລັງຈາກຖືກຄັດເລືອກ) ກຳນົດສົ່ງເອກະສານ ຕັ້ງແຕ່ວັນທີ **2 ກັນຍາ 2024** ເຖິງວັນທີ **9 *ກັນຍາ 20234***

***The Promotion of Family Health Association of Lao PDR***
***House No. 449 Unit 36, Phonkheng Village,***
***Saysettha District, Vientiane Capital, LAO PDR***
***Tel: 856 21 413261***
***Email: pfha@outlook.com/ Website: www.pfhalaos.org***

*ສະມາຄົມສົ່ງເສີມສຸຂະພາບຄອບຄົວ, ສປປ ລາວ*
*ເຮືອນເລກທີ 449 ໜ່ວຍ 36, ບ້ານ ໂພນເຄັງ ,*
*ໄຊເສດຖາ , ນະຄອນຫຼວງວຽງຈັນ, ສປປ ລາວ*
*ໂທ: 856 21 413261, ແຟັກ: 021 414918*
*ອີເມວ: pfha@outlook.com*